## ການສົ່ງເສີມເພື່ອທຸກໆຄົນ

ການສົ່ງເສີມແມ່ນເພື່ອຊາວກະສິກອນທັງຍິງ ແລະ ຊາຍ ທຸກໆຄົນບໍ່ວ່າຈະທຸກຈົນ ຫລື ຮັ່ງມີ ຊຶ່ງມາຈາກ ທຸກໆ ຊົນຊາດຊົນເຜົ່າ.

ໃນບາງກໍລະນີ, ອາດຈະແມ່ນກຸ່ມປະສົມລະຫ່ວາງຍິງ-ຊາຍ, ບາງກໍລະນີອາດແມ່ນກຸ່ມຂອງຊາຍ ຫລື ຍິງລ້ວນເຊິ່ງຂຶ້ນກັບວ່າໃຜເຮັດໜ້າວຽກຫຍັງແດ່. ຕົວຢ່າງວ່າຖ້າຜູ້ຍິງເປັນຄົນເບິ່ງແຍງໄກ່, ພວກເຂົາເຈົ້າກໍ່ຄວນເປັນສາມາຊິກຂອງກຸ່ມລ້ຽງໄກ່.

ການອ່ານອອກຂຽນເປັນ ແລະ ລະດັບການສຶກສາບໍ່ແມ່ນມາດຖານການເຂົ້າຮ່ວມກຸ່ມການສົ່ງເສີມ.

## ການສະໜັບສະໜູນຮູບແບບ

ການທີ່ຈະຂະຫຍາຍ ແລະ ເຮັດໃຫ້ການສົ່ງເສີມກະສິກຳໃນລາວມີຄວາມຍືນຍົງນັ້ນ, ແມ່ນຈະໄດ້ຮັບໝາກຜົນໂດຍຜ່ານການປະສົມ ປະສານຂອງຄວາມພະຍາຍາມລະຫ່ວາງລັດຖະບານກັບການຊ່ວຍເຫລືອຈາກແຫລ່ງຊັບພະຍາກອນ: ໂຄງການຮ່ວມມືກັນລະຫ່ວາງ ສອງ ຫລື ຫລາຍຝ່າຍ, ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGOs) ແລະ ພາກສ່ວນຂອງເອກະຊົນ.

*ການສະໜັບສະໜູນຮູບແບບການສົ່ງເສີມຢູ່ລາວ ບໍ່ແມ່ນກິດຈະກຳຂອງໂຄງການ ຫລື ຜູ້ໃຫ້ທຶນຜູ້ດຽວ.*

ການກໍ່ສ້າງສູນການຮ່ວມມື ໃນການສົ່ງເສີມກະສິກຳແຫ່ງຊາດແມ່ນກຳລັງດຳເນີນໂດຍກອງສົ່ງເສີມກະສິກຳແຫ່ງຊາດ ເພື່ອເຮັດໃຫ້ອົງ ການຈັດຕັ້ງທັງໝົດທີ່ພົວພັນກັບການສົ່ງເສີມກະສິກຳສາມາດ ແລກປ່ຽນຂໍ້ມູນຂ່າວສານເຊິ່ງກັນແລະກັນ. ພາກສ່ວນການຮ່ວມມືແມ່ນຈະຖືກຈັດຕັ້ງຂຶ້ນໃນລະດັບແຂວງ ເພື່ອເຮັດໃຫ້ໂຄງການຕ່າງໆສາມາດເຮັດວຽກຮ່ວມກັນກັບພະແນກກະສິກຳ-ປ່າໄມ້ແຂວງ ແລະ ສູນສົ່ງເສີມກະສິກຳ-ປ່າໄມ້ແຂວງດ້ວຍຮູບແບບການປະສານງານກັນ.

## ຜົນປະໂຫຍດຂອງຮູບແບບການສົ່ງເສີມຢູ່ລາວ

ຮູບແບບການສົ່ງເສີມຢູ່ລາວ ແມ່ນປະກອບສ່ວນເຂົ້າໃນເປົ້າໝາຍຂອງລັດຖະບານຫລາຍຢ່າງເຊັ່ນ:

- ຍົກສູງການຜະລິດສະບຽງອາຫານ
- ຫລຸດຜ່ອນຄວາມທຸກຈົນ
- ປັບປຸງຄວາມຍຸດຕິທຳໃນສັງຄົມ
- ສ້າງຄວາມເຂັ້ມແຂງໃນການກູ້ມຕົນເອງຂອງທ້ອງຖິ່ນ

ສຳລັບການຜະລິດສະບຽງອາຫານ, ເຫັນວ່າກິດຈະກຳທີ່ໄດ້ເຮັດສຳເລັດນັ້ນ ສາມາດເພີ້ມຜົນຜະລິດຂອງການເຮັດນາໄດ້ເຖິງ 50 %, ໃນຂະນະທີ່ການລ້ຽງໄກ່ສ່ວນຫລາຍກໍ່ໃຫ້ຜົນຜະລິດເປັນ 2 ເທົ່າ.

***ຂໍ້ມູນເພີ້ມເຕີມຂອງຮູບແບບການສົ່ງເສີມຢູ່ລາວ***
***ແມ່ນສາມາດຊອກຫາໄດ້ຈາກ:***

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFES),
ຫ້ວຍຍາງ, ຕູ້ ປ.ນ 1888, ນະຄອນຫລວງວຽງຈັນ, ສ.ປ.ປ ລາວ.
ໂທລະສັບ/ເຟັກ: (856) 21 740252
Web: www.LaoEx.org



## ຮູບແບບການສົ່ງເສີມຢູ່ລາວແມ່ນຫຍັງ?

ຮູບແບບການສົ່ງເສີມຢູ່ລາວແມ່ນ ໄດ້ຮັບການພັດທະນາ ແລະ ຮັບຮອງເອົາໂດຍກອງສົ່ງເສີມກະສິກຳ - ປ່າໄມ້ແຫ່ງຊາດ. ວິທີການດັ່ງ ກ່າວແມ່ນຖືກສ້າງຂື້ນບົນພື້ນຖານປະສົບການໃນໄລຍະຫລາຍໆປີທີ່ຜ່ານມາ.

ວິທີການສົ່ງເສີມແມ່ນປະກອບດ້ວຍ**ນະໂຍບາຍ, ຫລັກການ, ໂຄງສ້າງ** ແລະ **ການດຳເນີນການ**ເຊິ່ງຄວນຖືກນຳໃຊ້ໃຫ້ເປັນປະໂຫຍດໃນທົ່ວທຸກໆເມືອງ ແລະ ແຂວງ, ແລະ ຖືກນຳໃຊ້ໂດຍທຸກໆໂຄງການທີ່ສະໜັບສະໜູນກິດຈະກຳການສົ່ງເສີມໃນລາວ.

ຮູບແບບການສົ່ງເສີມຢູ່ລາວ ຄວນຖືກຈັດຕັ້ງປະຕິບັດໃນຮູບແບບທີ່ຍືດຢຸ່ນໄດ້. ຜູ້ບໍລິຫານໂຄງການ, ພະນັກງານແຂວງ ແລະ ພະນັກງານສະໜາມ ແມ່ນຖືກຄາດຫວັງໃຫ້ວາງແຜນ ແລະ ໜຸນສ້າງກິດຈະກຳການສົ່ງເສີມທີ່ແນ່ໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງອຳນາດການປົກຄອງບ້ານ ແລະ ຄອບຄົວຊາວກະສິກອນ.

## ນະໂຍບາຍ ແລະ ຫລັກການຂອງຮູບແບບການສົ່ງເສີມຢູ່ລາວ

ຮູບແບບການສົ່ງເສີມຢູ່ລາວ ແມ່ນອີງຕາມນະໂຍບາຍຂອງລັດຖະບານ, ເວົ້າສະເພາະແມ່ນບົນພື້ນຖານວິໃສທັດກ່ຽວກັບຍຸດທະສາດຂອງການກະສິກຳ (1999) ແລະ ຍຸດທະສາດການເຕີບໃຫຍ່ ແລະ ຫລຸດຜ່ອນຄວາມທຸກຈົນ ແຫ່ງຊາດ(2004). ການກຳໜົດຫລັກການຕ່າງໆແມ່ນສ້າງຂື້ນບົນພື້ນຖານປະສົບການຜ່ານມາ ແລະ ນະໂຍບາຍເຫລົ່ານີ້.

ກິດຈະກຳການສົ່ງເສີມຢູ່ລາວຄວນມີ:

- ແບ່ງຂັ້ນຄຸ້ມຄອງ
- ມີຫລາຍຮູບຫລາຍສີ
- ມີສ່ວນຮ່ວມ
- ບົນພື້ນຖານຄວາມຮຽກຮ້ອງຕ້ອງການ
- ມີການປະສົມປະສານຮອບດ້ານ
- ເນັ້ນໜັກບົດບາດຍິງຊາຍ
- ພື້ນຖານດຳເນີນງານເປັນກຸ່ມ
- ຄວາມຍືນຍົງ

## ໂຄງສ້າງຂອງຮູບແບບການສົ່ງເສີມຢູ່ລາວ

ຮູບແບບການສົ່ງເສີມຢູ່ລາວແມ່ນປະກອບດ້ວຍ 2 ພາກສ່ວນ: ການບໍລິການສົ່ງເສີມພາກລັດ ແລະ ລະບົບການສົ່ງເສີມຂັ້ນບ້ານ.

<u>ການບໍລິການສົ່ງເສີມພາກລັດ</u> ແມ່ນມີ 3 ຂັ້ນ: ກອງສົ່ງເສີມກະສິກຳ-ປ່າໄມ້ແຫ່ງຊາດ (NAFES), ສູນສົ່ງເສີມກະສິກຳ-ປ່າໄມ້ແຂວງ(PAFEC) ແລະ ຫ້ອງການສົ່ງເສີມກະສິກຳ-ປ່າໄມ້ເມືອງ(DAFES). ພະນັກງານຂັ້ນແຂວງແມ່ນເປັນວິຊາການສະເພາະດ້ານ (SMS) ແລະ ພະນັກງານຂັ້ນເມືອງທີ່ເປັນວິຊາການຮອບດ້ານ ແມ່ນເປັນນັກສົ່ງເສີມລະບົບກະສິກຳ (FSEWs).

<u>ລະບົບສົ່ງເສີມຂັ້ນບ້ານ</u> (VES) ແມ່ນພົວພັນກັບ 3 ກຸ່ມຄົນ. ກຸ່ມທີ 1, ອຳນາດການປົກຄອງບ້ານ, ແມ່ນກຸ່ມທີ່ວາງແຜນການ ແລະ ຈັດການກິດຈະກຳການສົ່ງເສີມເຊິ່ງແມ່ນສ່ວນໜຶ່ງ ຂອງແຜນພັດທະນາບ້ານຂອງພວກເຂົາ. ກຸ່ມທີ 2, ແມ່ນກຸ່ມການຜະລິດເຊິ່ງຖືກສ້າງໂດຍຊາວບ້ານທີ່ມີຄວາມສົນໃຈສິ່ງໃດສິ່ງໜຶ່ງໂດຍທົ່ວໄປ. ກຸ່ມທີ3, ແມ່ນກຸ່ມນັກສົ່ງເສີມຂັ້ນບ້ານ (VEWs) ເຊິ່ງເຮັດໜ້າທີ່ອຳນວຍຄວາມສະດວກໃຫ້ແກ່ກຸ່ມການຜະລິດໃນການ ດຳເນີນກິດຈະກຳ ແລະ ຊ່ວຍກະຈາຍຂໍ້ມູນຂ່າວສານໃຫ້ແກ່ ສາມາຊິກທຸກຄົນໃນຊຸມຊົນນັ້ນ. ກຸ່ມນັກສົ່ງເສີມຂັ້ນບ້ານແມ່ນໄດ້ຖືກແຕ່ງຕັ້ງຂື້ນ ແລະ ໄດ້ຮັບຜົນຕອບແທນຈາກຊຸມຊົນ. ໃນຂະນະທີ່ໄດ້ຮັບການຊ່ວຍເຫລືອທາງດ້ານເຕັກນິກ ໂດຍຜ່ານການບໍລິການພາກລັດ.

## ຂະບວນການຂອງຮູບແບບການສົ່ງເສີມຢູ່ລາວ

ການດຳເນີນລະບົບສົ່ງເສີມຂັ້ນບ້ານ ແມ່ນພົວພັນເຖິງວົງຈອນກິດຈະກຳຕ່າງໆອັນໜຶ່ງເຊິ່ງເລີ້ມຈາກ 'ການປະເມີນຄວາມຕ້ອງການໃນການເຝິກອົບຮົມ', ເຊິ່ງແມ່ນຂັ້ນຕອນທີ່ຊາວບ້ານເປັນຜູ້ຕົກລົງເຫັນດີເອົາ ບັນດາຄວາມຮູ້ຄວາມສາມາດທີ່ເຂົາເຈົ້າຕ້ອງການຢາກໄດ້.

ການປະເມີນໄດ້ນຳພາໄປສູ່ ການຈັດຕັ້ງບັນດາກຸ່ມການຜະລິດເຊິ່ງແມ່ນກຸ່ມຄົນທີ່ປະຕິບັດ'ໂຄງການຮ່ຳຮຽນ'.ຕົວຢ່າງ: ຊາວກະສິກອນ 12 ຄອບຄົວອາດຈັດຕັ້ງກຸ່ມການຜະລິດໜຶ່ງເພື່ອຮ່ຳຮຽນການລ້ຽງໄກ່. ຫລື 8 ຄອບຄົວອາດຈັດຕັ້ງກຸ່ມໜຶ່ງເພື່ອທົດສອບແນວພັນເຂົ້າໃໝ່.

ປົກກະຕິແລ້ວ ແຕ່ລະໂຄງການຮ່ຳຮຽນແມ່ນມີອາຍຸປະມານ 1 ເຖິງ 2 ລະດູການ, ໃນໄລຍະການຮ່ຳຮຽນສາມາຊິກຂອງກຸ່ມ ຜະລິດແມ່ນຈັດກອງປະຊຸມຢ່າງປົກກະຕິ ແລະ ພະຍາຍາມ ນຳເອົາເຕັກນິກຕ່າງໆໄປນຳໃຊ້ໃນຟາມຂອງຕົນ. ພະນັກງານ ຈາກສູນສົ່ງເສີມກະສິກຳ - ປ່າໄມ້ແຂວງ ແລະ ຫ້ອງການສົ່ງເສີມກະສິກຳ-ປ່າໄມ້ເມືອງແມ່ນເຮັດໜ້າທີ່ໃຫ້ຄຳແນະນຳແດ່ກຸ່ມຜະລິດໃໝ່. ຈາກນັ້ນໄປ, ບົດບາດນີ້ແມ່ນສາມາດດຳເນີນໂດຍນັກສົ່ງເສີມຂັ້ນບ້ານ.

ສາມາຊິກຂອງກຸ່ມຜະລິດ ແມ່ນຕິດຕາມຄວາມຄືບໜ້າຂອງຕົນເອງ. ກິດຈະກຳເພີ້ມເຕີມອື່ນໆເຊັ່ນການພົບປະແລກປ່ຽນ ຂອງຊາວກະສິກອນກໍ່ໄດ້ຖືກຈັດຂື້ນເພື່ອຮັບປະກັນການແຈກຢາຍຜົນປະໂຫຍດຕ່າງໆພາຍໃນບ້ານຂອງຕົນ ແລະ ບ້ານອື່ນ.